ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ພິທີປາຖະກະຖາເນື່ອງໃນໂອກາດວັນສ້າງຕັ້ງອົງການຈັດຕັ້ງ ສະຫະພັນແມ່ຍິງລາວ ຄົບຮອບ 65 ປີ (20/7/1955-20/7/2020)






ເນື່ອງໃນໂອກາດວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວ ວັນທີ 20 ກໍລະກົດ 1955 ທີ່ໄດ້ບັນຈົບຄົບຮອບ 65 ປີ ໃນປີນີ້ (20 ກໍລະກົດ 1955-20 ກໍລະກົດ 2020), ທັງເປັນການສ້າງຂະບວນການຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ເວົ້າລວມ, ເວົ້າສະເພາະ ແມ່ນເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ IV ຂອງອົງຄະນະພັກ ທະນາຄານແຫ່ງ ສປປ ລາວ, ສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີປາຖະກາ ຂຶ້ນໃນຕອນເຊົ້າຂອງວັນທີ 08 ສິງຫາ 2020 ທີ່ສະໂມສອນສະຖາບັນການທະນາຄານ ໂດຍມີການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ຄໍາວົງ ທິບພະວົງ, ຮອງເລຂາຄະນະພັກ, ຮອງຜູ້ວ່າການ ທຫລ, ຜູ້ຊີ້ນໍາວຽກງານ 3 ອົງການຈັດຕັ້ງມະຫາຊົນ, ສະຫາຍ ນາງ ສີລິກິດ ບຸບຜາ, ຄະນະພັກ, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ສະຫາຍ ນາງ ສາຍສະໝອນ ຈັນທະຈັກ, ຄະນະພັກ ທຫລ, ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານສະຫະພັນແມ່ຍິງ ທຫລ, ພ້ອມດ້ວຍພະນັກງານຫຼັກແຫຼ່ງອາວຸໂສບໍານານ ທີ່ເປັນເພດຍິງ ຈໍານວນໜຶ່ງ, ບັນດາຄະນະກົມພາຍໃນ ທຫລ, ບັນດາຄະນະອໍານວຍການຈາກ 8 ທະນາຄານທຸລະກິດ, ຕາງໜ້າບັນດາສະມາຊິກແມ່ຍິງຈາກ 9 ຮາກຖານອ້ອມຂ້າງ ທຫລ ແລະ ຕາງໜ້າຈາກອົງການຈັດຕັ້ງຊາວໜຸ່ມ ແລະ ກໍາມະບານ ທີ່ໄດ້ເຂົ້າຮ່ວມຢ່າງເປັນຂະບວນຟົດຟື້ນເກືອບ 700 ສະຫາຍ.




ໃນພິທີດັ່ງກ່າວໄດ້ເລີ່ມຕົ້ນດ້ວຍການຮັບຟັງການເຜີຍແຜ່ຜົນສຳເລັດຂອງກອງປະຊຸມໃຫຍ່ສະຫະພັນແມ່ຍິງ ທຫລ ຄັ້ງທີ X ຈາກສະຫາຍ ນາງ ສາຍສະໝອນ ຈັນທະຈັກ, ຄະນະພັກ ທຫລ, ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານສະຫະພັນແມ່ຍິງ ທຫລ ເພື່ອໃຫ້ບັນດາສະຫາຍທີ່ເຂົ້າຮ່ວມກອງປະຊຸມສາມາດກຳໄດ້ເນື້ອໃນໃຈຄວາມສຳຄັນຂອງກອງປະຊຸມດັ່ງກ່າວ ແລະ ທິດທາງ-ແຜນການເຄື່ອນໄຫວໃນ 5 ປີຕໍ່ໜ້າ (2020-2024) ຂອງສະຫະພັນແມ່ຍິງ ທຫລ. ຈາກນັ້ນ, ເພື່ອເປັນການທົບທວນຫວນຄືນມູນເຊື້ອປະຫວັດການກຳເນີດ, ການເຕີບໃຫຍ່ຂະຫຍາຍຕົວ ແລະ ຜົນງານການເຄື່ອນໄຫວຂອງອົງການຈັດຕັ້ງແມ່ຍິງລາວ ແລະ ແມ່ຍິງລາວບັນດາເຜົ່າ ທີ່ໄດ້ອຸທິດຕົນປະກອບສ່ວນເຂົ້າໃນພາລະກິດປົດປ່ອຍຊາດ ແລະ ປົກປັກຮັກສາ ສ້າງສາປະເທດຊາດ ກໍຄືພາລະກິດພັດທະນາແມ່ຍິງ ຕະຫຼອດໄລຍະ 65 ປີຜ່ານມາ, ບັນດາຜູ້ເຂົ້າຮ່ວມທັງໝົດກໍໄດ້ມີໂອກາດຮັບຟັງມູນເຊື້ອການເຄື່ອນໄຫວອັນດີງາມຂອງອົງການຈັດຕັ້ງແມ່ຍິງລາວ ໃນຕະຫອດໄລຍະ 65 ປີຜ່ານມາ ຜ່ານການປາຖະກະຖາ ແລະ ເຜີຍແຜ່ເອກະສານສັງລວມຜົນງານວຽກງານການເຄື່ອນໄຫວຂອງສູນກາງສະຫະພັນແມ່ຍິງລາວ ໃນໄລຍະ 5 ປີ (2016-2020) ໂດຍສະຫາຍ ນາງ ສີລິກິດ ບຸບຜາ, ຄະນະພັກ, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ. ພ້ອມກັນນັ້ນ, ພາຍຫຼັງສຳເລັດການດຳເນີນວາລະປາຖະກະຖາ, ເພື່ອເປັນທິດເຍືອງທາງໃຫ້ແກ່ການພັດທະນາແມ່ຍິງ ກໍຄືອົງການຈັດຕັ້ງແມ່ຍິງໃຫ້ນັບມື້ນັບເຂັ້ມແຂງ ແລະ ກ້າວໜ້າ ຍິ່ງໆຂຶ້ນໄປ, ສະຫາຍ ຄຳວົງ ທົບພະວົງ, ສະຫາຍ ຄຳວົງ ທົບພະວົງ, ຮອງເລຂາຄະນະພັກ,ຮອງຜູ້ວ່າການ ທຫລ, ຜູ້ຊີ້ນຳວຽກງານ 3 ອົງການຈັດຕັ້ງມະຫາຊົນໄດ້ມີຄຳເຫັນໂອ້ລົມທີ່ເຕັມໄປດ້ວຍຄວາມໝາຍຄວາມສຳຄັນແກ່ງານພິທີ.

ພິທີໄດ້ດຳເນີນໄປດ້ວຍບັນຍາກາດຟົດຟື້ນ ທັງເຕັມໄປດ້ວຍເນື້ອໃນທີ່ມີຄວາມໝາຍ ແລະ ປິດລົງດ້ວຍຜົນສຳເລັດຢ່າງຈົບງາມໃນຕອນເຊົ້າຂອງວັນດຽວກັນ.




**# ຂ່າວໂດຍ: ສະຫະພັນແມ່ຍິງ ທຫລ**

**# ພາບໂດຍ: ນາງ ປາໄນ ພັນທະລາ**

# ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ